ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1327 /ອຄ.ທຄວ

ນະຄອນຫຼວງວຽງຈັນ, ວັນທີ 13 JUL 2015

# ແຈ້ງການ

ເຖິງ: - ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ

- ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ

- ນັກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ

ເລື່ອງ: ບັນຊີປະເພດທຸລະກິດມີເງື່ອນໄຂສຳລັບຜູ້ລົງທຶນຕ່າງປະເທດ (ສະບັບປັບປຸງ / ງົ 02 – 2015)

- ອີງໃສ່ມາດຕາ 13 ຂອງຂໍ້ຕົກລົງ, ເລກທີ 1005/ອຄ.ຄພນ, ລົງວັນທີ 22 ພຶດສະພາ 2015, ວ່າດ້ວຍທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ.

ເພື່ອໃຫ້ນັກລົງທຶນຕ່າງປະເທດ ມີຄວາມສະດວກ ໃນການພິຈາລະນາ ກ່ອນການປະກອບທຸລະກິດໃດໜຶ່ງ ຢູ່ປະເທດເຮົາ ວ່າ : ມີທຸລະກິດ ປະເພດໃດ ແລະ ມີເງື່ອນໄຂ ຂໍ້ກຳນົດສະເພາະແນວໃດ ຕໍ່ຜູ້ລົງທຶນຕ່າງປະເທດ, ກະຊວງອຸດສາຫະກຳ ແລະການຄ້າ (ບົນພື້ນຖານການຄົ້ນຄວ້າ ສະເໜີຂອງບັນດາຂະແໜງການທີ່ກ່ຽວຂ້ອງ), ແຈ້ງ ກ່ຽວກັບການປັບປຸງ ບາງລາຍການປະເພດທຸລະກິດ ໃນ (ບັນຊີ ງົ 01 - 2013) ມາເປັນ (ບັນຊີ ງົ 02 - 2015) ມາຍັງພາກສ່ວນທີ່ກ່ຽວຂ້ອງ ຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

1. ປະເພດທຸລະກິດມີເງື່ອນໄຂ ສຳລັບຜູ້ລົງທຶນຕ່າງປະເທດ ແມ່ນທຸລະກິດທີ່ບໍ່ຫ້າມຜູ້ລົງທຶນຕ່າງປະເທດເຮັດ ແຕ່ມີເງື່ອນໄຂຂໍ້ຈຳກັດບາງປະການ ເຊັ່ນ: ກຳນົດທຶນຈົດທະບຽນຕ່ຳສຸດ ສູງສຸດ ຫລື ກຳນົດອັດຕາສ່ວນຮຸ້ນ ຂອງຜູ້ລົງຕ່າງປະເທດໃນວິສາຫະກິດ ຫລື ເງື່ອນໄຂຂໍ້ຈຳກັດອື່ນໆ. ຜູ້ລົງທຶນຕ່າງປະເທດ ໝາຍເຖິງບຸກຄົນ ທີ່ບໍ່ແມ່ນພົນລະເມືອງລາວ ຕາມກົດໝາຍວ່າດ້ວຍສັນຊາດ ແລະນິຕິບຸກຄົນທີ່ຂຶ້ນທະບຽນວິສາຫະກິດຢູ່ຕ່າງປະເທດ;

2. ບັນຊີປະເພດທຸລະກິດມີເງື່ອນໄຂສຳລັບຜູ້ລົງທຶນຕ່າງປະເທດ (ສະບັບປັບປຸງ / ງົ 02 – 2015 (ຄັດຕິດມາພ້ອມນີ້) ;

3. ການອະນຸຍາດ ຫລື ຂຶ້ນທະບຽນວິສາຫະກິດ ໃຫ້ບຸກຄົນ ຫລື ນິຕິບຸກຄົນທີ່ບໍ່ຖືກຕ້ອງ ຕາມແຈ້ງການສະບັບນີ້ ລ້ວນແຕ່ເປັນໂມຄະ. ຜູ່ລະເມີດ ຕ້ອງຮັບຜິດຊອບຕໍ່ໜ້າກົດໝາຍ ;

4. ພາກສ່ວນ ຫລື ຂະແໜງການກ່ຽວຂ້ອງ ຕ້ອງມີນິຕິກຳ ດັດສົມລະອຽດ ຈະແຈ້ງ ຕໍ່ທຸກລາຍການປະເພດທຸລະກິດມີເງື່ອນໄຂ ສຳລັບຜູ້ລົງທຶນຕ່າງປະເທດ ເພື່ອຄວາມສະດວກໃນການຈັດຕັ້ງປະຕິບັດ;

5. ໃນໄລຍະຈັດຕັ້ງປະຕິບັດ ແຈ້ງການສະບັບນີ້ ຫາກພາກສ່ວນ ຫລື ຂະແໜງການໃດ ເຫັນວ່າມີອັນຍັງບໍ່ທັນສອດຄ່ອງ ຢາກເພີ້ມເຂົ້າ ຫລື ຕັດອອກຈາກບັນຊີດັ່ງກ່າວ ໃຫ້ແຈ້ງກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອປັບປຸງ ປະກາດໃຊ້ເພີ້ມເຕີມຕໍ່ໄປ.

6. ແຈ້ງການສະບັບນີ້, ປ່ຽນແທນແຈ້ງການ, ສະບັບເລກທີ 1591/ອຄ.ທຄວ, ລົງວັນທີ 26 ສິງຫາ 2013 ກ່ຽວກັບບັນຊີປະເພດທຸລະກິດ ມີເງື່ອນໄຂ ສຳລັບຜູ້ລົງທຶນຕ່າງປະເທດ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ທ. ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ

ສົງວນສະຫວາດ ສະແຫວງສຶກສາ

# ບັນຊີ ງ 02 - 2015

## ບັນຊີປະເພດທຸລະກິດມີເງື່ອນໄຂສຳລັບຜູ້ລົງທຶນຕ່າງປະເທດ (ສະບັບປັບປຸງ)

| ຂະແໜງການ | ເລກລະຫັດ ISIC | ປະເພດທຸລະກິດ | ເງື່ອນໄຂສຳລັບຜູ້ລົງທຶນຕ່າງປະເທດ | | ນິຕິກຳທີ່ກ່ຽວຂ້ອງ | ພາກສ່ວນຮັບຜິດຊອບ |
|---|---|---|---|---|---|---|
| | | | ທຶນຈົດທະບຽນ (ກີບ) | ອັດຕາສ່ວນຮ້ອຍ (%) | | |
| ອຸດສາຫະກຳປຸງແຕ່ງ | | | | | | |
| | 1079 | ການປຸງແຕ່ງຕະລິດຕະພັນສະບຽງອາຫານອື່ນໆ ທີ່ບໍ່ທັນຈັດເຂົ້າບ່ອນໃດ | 1 ຕື້ຂຶ້ນໄປ | 20% | - ແຈ້ງການວ່າດ້ວຍໃຫ້ໂຈະການຂຶ້ນທະບຽນວິສາຫະກິດໃຫ້ຜູ້ລົງທຶນຕ່າງປະເທດ ເພື່ອສ້າງຕັ້ງໂຮງງານປຸງແຕ່ງກາເຟໃນຂອບເຂດທົ່ວປະເທດ ເລກທີ1036/ອຄ.ສລທ | ກຊ ອຄ |
| | 2100 | ການຕະລິດຢາປົວພະຍາດ, ຕະລິດເຄມີ ໃຊ້ປຸງແຕ່ງຢາ ແລະ ຕະລິດຕະພັນການຢາຈາກພືດ | 1 ຕື້ຂຶ້ນໄປ | 49% | - ກົດໝາຍວ່າດ້ວຍຢາ ແລະ ຕະລິດຕະພັນການແພດ ສະບັບປັບປຸງ ເລກທີ 07/ສພຊ, ລົງວັນທີ 27 ທັນວາ 2011;<br>- ແຈ້ງການວ່າດ້ວຍການຄຸ້ມຄອງອຸປະກອນການແພດໃນ ສປປລາວ, ເລກທີ 310/ກຊສ, ລົງວັນທີ 20/13/2013. | ກຊ ສທ |
| ການກໍ່ສ້າງ | | | | | | |
| | 4210 | ການກໍ່ສ້າງຖະໜົນ ແລະ ທາງລົດໄຟ ສຳລັບ ISIC ນີ້ມີເງື່ອນໄຂສະເພາະການກໍ່ສ້າງທາງ ແລະ ຂົວ ຄື:<br>ກ. ສຳລັບການຮຸ້ນສ່ວນພາຍໃນ ແລະ ຕ່າງປະເທດ | 1ຕື້ຫາ 240ຕື້ | 49% | - ແຈ້ງການກ່ຽວກັບລະບຽບການໃນການອະນຸຍາດສ້າງຕັ້ງທຸລະກິດຄວບຄຸມໃນຂະແໜງໂຍທາ ແລະ ຂົນສົ່ງ, ສະບັບເລກທີ 13779/ຍທຂ, ລົງວັນທີ 21 ສິງຫາ 2012 | ກຊ ຍທຂ |

| | | | | | |
|---|---|---|---|---|---|
| | | ຂ. ສຳລັບການລົງທຶນຕ່າງປະເທດ | 240 ຕື້ຂຶ້ນໄປ | 100% | | |
| | 4312 | ການກະກຽມສະຖານທີ່ກໍ່ສ້າງສຳລັບ ISIC ນີ້ມີເງື່ອນໄຂສະເພາະການບຸກເບີກສະຖານທີ່ກໍ່ສ້າງ(ຂຸດດິນແລະຖົມດິນ) ຄື:<br>ກ. ໂຄງການຂະໜາດນ້ອຍ | 8ຕື້ ຫາ 40ຕື້ | 49% | - ແຈ້ງການກ່ຽວກັບລະບຽບການໃນການອະນຸຍາດສ້າງຕັ້ງທຸລະກິດຄວບຄຸມໃນຂະແໜງໂຍທາ ແລະ ຂົນສົ່ງ, ສະບັບເລກທີ 13779/ຍທຂ, ລົງວັນທີ 21 ສິງຫາ 2012 | ກຊ ຍທຂ |
| | | ຂ. ໂຄງການຂະໜາດໃຫຍ່ | 40 ຕື້ຂຶ້ນໄປ | | | |
| | 4329 | ການກໍ່ສ້າງຕິດຕັ້ງອື່ນໆ ສຳລັບISIC ນີ້ມີເງື່ອນໄຂສະເພາະ ການປະກອບຊິ້ນສ່ວນສິ່ງປຸກສ້າງ ຄື:<br>ກ. ໂຄງການຂະໜາດນ້ອຍ | 8ຕື້ ຫາ 40ຕື້ | 49% | - ແຈ້ງການກ່ຽວກັບລະບຽບການໃນການອະນຸຍາດສ້າງຕັ້ງທຸລະກິດຄວບຄຸມໃນຂະແໜງໂຍທາ ແລະ ຂົນສົ່ງ, ສະບັບ ເລກທີ 13779/ຍທຂ, ລົງວັນທີ 21 ສິງຫາ 2012 | ກຊ ຍທຂ |
| | | ຂ. ໂຄງການຂະໜາດໃຫຍ່ | 40 ຕື້ຂຶ້ນໄປ | | | |
| | 4330 | ການເຮັດໃຫ້ຕຶກອາຄານສຳເລັດ ແລະ ສົມບູນ ສຳລັບ ISIC ນີ້ມີເງື່ອນໄຂສະເພາະ ການປະດັບຕົບແຕ່ງພາຍໃນ ແລະ ພາຍນອກ (ຊໍ້າທ້າຍ) ຄື:<br>ກ. ໂຄງການຂະໜາດນ້ອຍ | 8ຕື້ ຫາ 40ຕື້ | 49% | - ແຈ້ງການກ່ຽວກັບລະບຽບການໃນການອະນຸຍາດສ້າງຕັ້ງທຸລະກິດຄວບຄຸມໃນຂະແໜງໂຍທາ ແລະ ຂົນສົ່ງ, ສະບັບເລກທີ 13779/ຍທຂ, ລົງວັນທີ 21 ສິງຫາ 2012 | ກຊ ຍທຂ |
| | | ຂ. ໂຄງການຂະໜາດໃຫຍ່ | 40 ຕື້ຂຶ້ນໄປ | | | |
| ການຄ້າຂາຍຍົກ ແລະ ຂາຍຍ່ອຍ; ສ້ອມແປງລົດຍົນ ແລະ ລົດຈັກ | | | | | | |
| | 4520 | ການບຳລຸງຮັກສາ ແລະ ສ້ອມແປງລົດຍົນ (ສຳລັບ ISIC ນີ້ມີເງື່ອນໄຂສະເພາະການສ້າງຕັ້ງອູ່ສ້ອມແປງພາຫະນະ ແລະ ກົນຈັກ ) | 1,5 ຕື້ຂຶ້ນໄປ | 100% | - ແຈ້ງການກ່ຽວກັບລະບຽບການໃນການອະນຸຍາດສ້າງຕັ້ງທຸລະກິດຄວບຄຸມໃນຂະແໜງໂຍທາ ແລະ ຂົນສົ່ງ, ສະບັບເລກທີ 13779/ຍທຂ, ລົງວັນທີ 21 ສິງຫາ 2012 | ກຊ ຍທຂ |

| | | | | | | |
|---|---|---|---|---|---|---|
| | 4690 | ການຄ້າຂາຍຍົກທີ່ບໍ່ເປັນອັນສະເພາະ (ໝາຍເຖິງທຸລະກິດການຄ້າຂາຍຍົກ) | ຕໍ່າກວ່າ 10ຕື້ ແຕ່ບໍ່ຫຼຸດ 4ຕື້ | 50% | - ຂໍ້ຕົກລົງວ່າດ້ວຍທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ສະບັບເລກທີ 1005/ອຄ.ຄພນ, ລົງວັນທີ 22 ພຶດສະພາ 2015 | ກຊ ອຄ |
| | | | ຕໍ່າກວ່າ 20ຕື້ ແຕ່ບໍ່ຫຼຸດ 10ຕື້ | 70% | | |
| | | | 20 ຕື້ ຂຶ້ນໄປ | 100% | | |
| | 4719 | ຂາຍຍ່ອຍອື່ນໆຕາມຮ້ານຄ້າທົ່ວໄປ(ໝາຍເຖິງທຸລະກິດການຄ້າຂາຍຍ່ອຍ) | ຕໍ່າກວ່າ 10ຕື້ ແຕ່ບໍ່ຫຼຸດ 4ຕື້ | 50% | - ຂໍ້ຕົກລົງວ່າດ້ວຍທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ສະບັບເລກທີ 1005/ອຄ.ຄພນ, ລົງວັນທີ 22 ພຶດສະພາ 2015 | ກຊ ອຄ |
| | | | ຕໍ່າກວ່າ 20ຕື້ ແຕ່ບໍ່ຫຼຸດ 10ຕື້ | 70% | | |
| | | | 20 ຕື້ ຂຶ້ນໄປ | 100% | | |
| ການຂົນສົ່ງ ແລະ ສາງສິນຄ້າ | | | | | | |
| | 4922 | ການຂົນສົ່ງໂດຍສານທາງບົກອື່ນໆ ( ສໍາລັບ ISIC ນີ້ມີເງື່ອນໄຂສະເພາະການບໍລິການລົດແທັກຊີມີເຕີ ) | 5 ຕື້ ຂຶ້ນໄປ | 100% | - ແຈ້ງການກ່ຽວກັບລະບຽບການໃນການອະນຸຍາດສ້າງຕັ້ງທຸລະກິດຄວບຄຸມໃນຂະແໜງໂຍທາ ແລະ ຂົນສົ່ງ, ສະບັບເລກທີ 13779/ຍທຂ, ລົງວັນທີ 21 ສິງຫາ 2012 | ກຊ ຍທຂ |
| | 4923 | ການຂົນສົ່ງສິນຄ້າຜ່ານທາງຫຼວງ( ສໍາລັບ ISIC ນີ້ມີເງື່ອນໄຂສະເພາະຄື: ກ. ການດໍາເນີນທຸລະກິດຂົນສົ່ງສິນຄ້າພາຍໃນປະເທດ | 3 ຕື້ ຂຶ້ນໄປ | 100% | - ແຈ້ງການກ່ຽວກັບລະບຽບການໃນການອະນຸຍາດສ້າງຕັ້ງທຸລະກິດຄວບຄຸມໃນຂະແໜງໂຍທາ ແລະ ຂົນສົ່ງ, ສະບັບເລກທີ 13779/ຍທຂ, ລົງວັນທີ 21 ສິງຫາ 2012 | ກຊ ຍທຂ |
| | | ຂ. ທຸລະກິດຂົນສົ່ງສິນຄ້າລະຫວ່າງປະເທດຫຼືຂ້າມປະເທດ) | 5 ຕື້ຂຶ້ນໄປ | 49% | | |

| | | | | | | |
|---|---|---|---|---|---|---|
| | 5210 | ໂຮງເກັບສິນຄ້າ ແລະ ສາງເຄື່ອງ(ສຳລັບ ISIC ນີ້ມີເງື່ອນ ໄຂສະເພາະ ການບໍລິການ ເກັບຮັກສາ ແລະ ສາງສິນຄ້າ ) | 1 ຕື້ຂຶ້ນໄປ | 49% | - ແຈ້ງການກ່ຽວກັບລະບຽບການໃນການອະນຸຍາດສ້າງ ຕັ້ງທຸລະກິດຄວບຄຸມໃນຂະແໜງໂຍທາ ແລະ ຂົນສົ່ງ, ສະບັບເລກທີ 13779/ຍທຂ, ລົງວັນທີ 21 ສິງຫາ 2012 | ກຊ ຍທຂ |
| | 5221 | ການເຄື່ອນໄຫວບໍລິການປະຈຳວັນ ໃຫ້ການ ຂົນສົ່ງທາງບົກ ສຳລັບ ISIC ນີ້ ມີເງື່ອນໄຂ ສະເພາະ ຄື:<br>ກ.ທຸລະກິດສະຖານີສົ່ງສິນຄ້າ ພາຍໃນປະເທດ | 5 ຕື້ຂຶ້ນໄປ | 49% | - ແຈ້ງການກ່ຽວກັບລະບຽບການໃນການອະນຸຍາດສ້າງ ຕັ້ງທຸລະກິດຄວບຄຸມໃນຂະແໜງໂຍທາ ແລະ ຂົນສົ່ງ, ສະບັບເລກທີ 13779/ຍທຂ, ລົງວັນທີ 21 ສິງຫາ 2012 | ກຊ ຍທຂ |
| | | ຂ. ທຸລະກິດສະຖານີສົ່ງສິນຄ້າລະຫວ່າງປະ ເທດ ແລະ ຜ່ານແດນ | 10 ຕື້ຂຶ້ນໄປ | | | |
| | 5229 | ກິດຈະກຳ ຜູ້ພູນການຂົນສົ່ງອື່ນໆ ສຳລັບ ISIC ນີ້ ມີເງື່ອນໄຂສະເພາະຄື:<br>ກ. ທຸລະກິດຈັດສົ່ງສິນຄ້າພາຍໃນປະເທດ<br>ຂ. ທຸລະກິດຈັດສົ່ງສິນຄ້າລະຫວ່າງປະເທດ | 3 ຕື້ຂຶ້ນໄປ | 49% | - ແຈ້ງການກ່ຽວກັບລະບຽບການໃນການອະນຸຍາດສ້າງ ຕັ້ງທຸລະກິດຄວບຄຸມໃນຂະແໜງໂຍທາ ແລະ ຂົນສົ່ງ, ສະບັບເລກທີ 13779/ຍທຂ, ລົງວັນທີ 21 ສິງຫາ 2012 | ກຊ ຍທຂ |
| ການເຄື່ອນໄຫວ ດ້ານທີ່ພັກເຊົາ ແລະ ບໍລິການອາຫານ | | | | | | |
| | 5510 | ການເຄື່ອນໄຫວໃຫ້ທີ່ພັກເຊົາໄລຍະສັ້ນ (ໂຮງແຮມ 3 ຫາ 5 ດາວ) | 1 ຕື້ຂຶ້ນໄປ | 60% | - ກົດໝາຍວ່າດ້ວຍການທ່ອງທ່ຽວ ເລກທີ 10/ສພຊ, ລົງວັນທີ 09//11/2005;<br>- ມະຕິຕົກລົງຂອງ ປະທານສະພາລັດຖະມົນຕີ ເລກທີ 91/ປສລ, ລົງວັນທີ04/10/1989 ວ່າດ້ວຍການທ່ອງ ທ່ຽວ;<br>- ແຈ້ງການເລກທີ 57/ຖວທ,ລົງວັນທີ 31/01/2013. | ກຊ ຖວທ |

| | | | | | | |
|---|---|---|---|---|---|---|
| ການເຄື່ອນໄຫວດ້ານການເງິນ ແລະ ການປະກັນໄພ | | | | | | |
| | 6419 | ສິ່ງກາງດ້ານການເງິນອື່ນໆ ສຳລັບ ISIC ນີ້ມີເງື່ອນໄຂຄື :<br>ກ. ການສ້າງຕັ້ງທະນາຄານ( ທະນາຄານທຸລະກິດ) | 300 ຕື້ຂຶ້ນໄປ (ພາຍໃນ - ຕ່າງປະເທດ) | ສາມາດຮ່ວມທຶນໄດ້ຕາມອັດຕາສ່ວນການຕົກລົງລະຫວ່າງຜູ້ຖືຫຸ້ນ | - ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ, ເລກທີ 05/ສພຊ, ລົງວັນທີ 14/10/1999;<br>- ກົດໝາຍວ່າດ້ວຍທະນາຄານທຸລະກິດ, ເລກທີ 03/ສພຊ, ລົງວັນທີ 26/12/2006;<br>- ລັດຖະບັນຍັດວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ,ສະບັບເລກທີ01/ປປທ,ລົງວັນທີ 17/03/2008;<br>- ບົດແນະນຳກ່ຽວກັບຂັ້ນຕອນຂໍອະນຸຍາດສ້າງຕັ້ງທະນາຄານທຸລະກິດ, ເລກທີ 705/ກຄທສ, ລົງວັນທີ 31/12/2007;<br>- ແຈ້ງການກ່ຽວກັບເງື່ອນໄຂ ແລະ ການປະກອບເອກະສານສ້າງຕັ້ງສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ, ເລກທີ 154/ກຄສງ, ລົງວັນທີ 17/02/2012. | ທຫລ |
| | | ຂ. ສາຂາ ທະນາຄານ | 100 ຕື້ຂຶ້ນໄປ | | | |
| | | ຄ. ການສ້າງສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ | 3 ຕື້ຂຶ້ນໄປ (ພາຍໃນ - ຕ່າງປະເທດ) | | | |
| ການເຄື່ອນໄຫວດ້ານສາຍວິຊາຊີບ, ວິທະຍາສາດ ແລະ ເຕັກນິກ | | | | | | |
| | 7110 | ການເຄື່ອນໄຫວດ້ານສະຖາປັດຕະຍະກຳ ແລະ ວິສາວະກຳ ແລະ ການໃຫ້ການປຶກສາ ສຳລັບ ISIC ນີ້ມີເງື່ອນໄຂ ສະເພາະ ຄື:<br>ກ. ການຄົ້ນຄວ້າແລະສຶກສາຄວາມເປັນໄປໄດ້ຂອງໂຄງການ | 4 ຕື້ ຫາ 8ຕື້ (ໂຄງການຂະໜາດນ້ອຍ )<br>8 ຕື້ ຂຶ້ນໄປ (ໂຄງການຂະ | 49% | - ແຈ້ງການກ່ຽວກັບລະບຽບການໃນການອະນຸຍາດສ້າງຕັ້ງທຸລະກິດຄວບຄຸມໃນຂະແໜງໂຍທາ ແລະ ຂົນສົ່ງ , ສະບັບເລກທີ 13779/ຍທຂ, ລົງວັນທີ 21 ສິງຫາ 2012 | ກຊ ຍທຂ |
| | | ຂ. ການສຳຫຼວດແລະອອກແບບເຄຫາສະຖານ ແລະ ຜັງ ເມືອງ | | | | |

| | | | | | | |
|---|---|---|---|---|---|---|
| | | ຄ. ການຕົບແຕ່ງພາຍໃນ ແລະ ພາຍນອກ | ໜາດໃຫຍ່ ) | | | |
| | | ງ. ທີ່ປຶກສາດ້ານການກໍ່ສ້າງ | | | | |
| | | ຈ. ສຳຫຼວດອອກແບບ ແລະ ວິສາວະກຳກໍ່ສ້າງ | | | | |
| | 7120 | ການກວດສອບດ້ານເຕັກນິກ ແລະການວິເຄາະ ( ສຳລັບ ISIC ນີ້ມີເງື່ອນໄຂສະເພາະການສ້າງຕັ້ງສູນກວດກາເຕັກນິກຍານພາຫະນະ ) | 1 ຕື້ຂຶ້ນໄປ | 100% | - ແຈ້ງການກ່ຽວກັບລະບຽບການໃນການອະນຸຍາດສ້າງຕັ້ງທຸລະກິດຄວບຄຸມໃນຂະແໜງໂຍທາ ແລະ ຂົນສົ່ງ , ສະບັບເລກທີ 13779/ຍທຂ, ລົງວັນທີ 21 ສິງຫາ 2012 | ກຊ ຍທຂ |
| ການສຶກສາ | | | | | | |
| | 8549 | ການສຶກສາດ້ານອື່ນໆທີ່ບໍ່ທັນຈັດເຂົ້າບ່ອນໃດ ສຳລັບ ISIC ນີ້ ມີເງື່ອນໄຂສະເພາະຄື: ກ. ໂຮງຮຽນສອນຂັບລົດທົ່ວໄປ | 8 ຕື້ຂຶ້ນໄປ | 49% | - ແຈ້ງການກ່ຽວກັບລະບຽບການໃນການອະນຸຍາດສ້າງຕັ້ງທຸລະກິດຄວບຄຸມໃນຂະແໜງໂຍທາ ແລະ ຂົນສົ່ງ , ສະບັບເລກທີ 13779/ຍທຂ, ລົງວັນທີ 21 ສິງຫາ 2012 | ກຊ ຍທຂ |
| | | ຂ. ໂຮງຮຽນສອນຂັບລົດກົນຈັກໜັກ | 15 ຕື້ຂຶ້ນໄປ | 100% | | |
| ການເຄື່ອນໄຫວກ່ຽວກັບສຸຂະພາບມະນຸດ ແລະ ວຽກງານທາງສັງຄົມ | | | | | | |
| | 8690 | ການເຄື່ອນໄຫວກ່ຽວກັບສຸຂະພາບມະນຸດອື່ນໆ( ສຳລັບ ISIC ນີ້ ມີເງື່ອນໄຂສະເພາະການດຳເນີນທຸລະກິດດ້ານ ການແພດ ແລະ ການແພດພື້ນເມືອງ ) | 1 ຕື້ຂຶ້ນໄປ | 49% | - ອີງໃສ່ ກົດໝາຍວ່າດ້ວຍການປິ່ນປົວ ເລກທີ 53/ສພຊ, ລົງວັນທີ 9 ພະຈິກ 2005;<br>- ດຳລັດວ່າດ້ວຍໂຮງໝໍເອກະຊົນ, ເລກທີ 16/ນຍ, ລົງວັນທີ 9/4/1998. | ກຊ ສທ |

ໝາຍເຫດ:

- ບັນຊີ ງ 02 – 2015 (ສະບັບປັບປຸງ ) ປ່ຽນແທນ ແລະ ລົບລ້າງ ບັນຊີ ງ 01 – 2013 ທຸກໆກິດຈະການໃນບັນຊີ ງ 02 – 2015 (ສະບັບປັບປຸງ ) ຊຶ່ງເປັນກິດຈະການທີ່ຄາດຄະເນຈະສ້າງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຕ້ອງໄດ້ປະຕິບັດຕາມລະບຽບການ ຂອງຂະແໜງການທີ່ກ່ຽວຂ້ອງ;
- ສຳລັບ ISIC2100 ແລະ 8690ແມ່ນຄົນຕ່າງປະເທດສາມາດຮ່ວມທຶນໄດ້ ແຕ່ຕ້ອງແມ່ນຄົນລາວເປັນເຈົ້າຂອງວິຊາຊີບ ແລະ ເປັນຜູ້ຖືທະບຽນ ວິສາຫະກິດພ້ອມມີສ່ວນຮ່ວມໃນການບໍລິ ການ
- ປະເພດທຸລະກິດໃນບັນຊີ ງ 02 – 2015 (ສະບັບປັບປຸງ ) ແມ່ນໄດ້ຄົ້ນຄວ້າ ແລະ ລວບລວມມາຈາກ ຄຳສະເໜີຂອງ ບັນດາກະຊວງ ທີ່ກ່ຽວຂ້ອງ.